**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 25 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍການຮັບຮອງເອົາ ຜົນການກວດສອບບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ແລະ ຜົນການກວດສອບ ປະຈຳປີ 2020, ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການກວດສອບແຫ່ງລັດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 12 ຂໍ້ 1.4 ແລະ ມາດຕາ 59 ຂໍ້ 3;
- ອີງຕາມກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ (ສະບັບປັບປຸງ) ປີ 2016;
- ອີງຕາມ ບົດລາຍງານຂອງອົງການກວດສອບແຫ່ງລັດ ສະບັບເລກທີ 1210/ອກລ, ລົງວັນທີ 2/11/2021.

ຜ່ານການພິຈາລະນາຢ່າງເລິກເຊິ່ງ ແລະ ກວ້າງຂວາງ ຕໍ່ຜົນການກວດສອບບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ແລະ ຜົນການກວດສອບ ປະຈຳປີ 2020, ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການກວດສອບແຫ່ງລັດ ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ວາລະກອງປະຊຸມ ວັນທີ 5 ພະຈິກ 2021.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາຜົນການກວດສອບບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ແລະ ຜົນການກວດສອບ ປະຈຳປີ 2020**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດສອບແຫ່ງລັດ ທີ່ໄດ້ເອົາໃຈໃສ່ສູ້ຊົນກວດສອບ ບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ແລະ ຜົນການກວດສອບ ປະຈຳປີ 2020 ໃນເງື່ອນໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແຜ່ລະບາດຂອງພະຍາດ ໂຄວິດ-19, ແຕ່ອົງການກວດສອບແຫ່ງລັດ ໄດ້ພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ, ສຳເລັດການກວດສອບ ແລະ ສະເໜີລາຍງານຕໍ່ກອງປະຊຸມສະພາແຫ່ງຊາດໄດ້ທັນເວລາ.

ແຕ່ຄຽງຄູ່ກັບນັ້ນ, ກອງປະຊຸມ ເຫັນວ່າ ການກວດສອບ ປິດສະຫຼຸບຂາດຕົວ ແລະ ຜົນການກວດສອບ ດັ່ງກ່າວ ຍັງບໍ່ໄດ້ຄົບຖ້ວນທຸກເປົ້າໝາຍຕາມແຜນການ, ການກວດສອບໄດ້ລົງເລິກກວດສອບເອກະສານລາຍງານການເງິນ ແລະ ຄວາມສອດຄ່ອງທາງດ້ານກົດໝາຍ ແຕ່ບໍ່ທັນໄດ້ລົງເລິກ ການກວດສອບຜົນງານຈັດຕັ້ງປະຕິບັດ.

1. ຜົນການກວດສອບຄືນການຈັດຕັ້ງປະຕິບັດ ການແກ້ໄຂຜົນການກວດສອບ ຕາມມະຕິ ເລກທີ 14/ສພຊ, ລົງວັນທີ 4 ພະຈິກ 2020

1.1 ດ້ານລາຍຮັບ: ກວດສອບເຫັນເພີ່ມ ຈຳນວນ 337,01 ຕື້ກີບ ຢູ່ 11 ກະຊວງ ແລະ 13 ແຂວງ-ນະຄອນຫຼວງວຽງຈັນ ຊຶ່ງໄດ້ແກ້ໄຂ ຈຳນວນ 40,24 ຕື້ກີບ, ຍັງບໍ່ທັນໄດ້ແກ້ໄຂ ຈຳນວນ 296,77 ຕື້ກີບ ໃນນັ້ນ:

- ຍອດເຫຼືອເງິນລາຍຮັບ ສຳລັບ ບ້ວງສ່ວຍສາອາກອນ, ຊັບສິນ ແລະ ອື່ນໆ ຈຳນວນ 236,82 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 29,48 ຕື້ກີບ, ຍັງຄ້າງ ຈຳນວນ 207,34 ຕື້ກີບ;
- ເງິນລາຍຮັບວິຊາການ ທີ່ເອົາໄປຈ່າຍນອກແຜນ ຈຳນວນ 88,04 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 5,82 ຕື້ກີບ, ຍັງຄ້າງ ຈຳນວນ 82,22 ຕື້ກີບ;
- ຍອດເຫຼືອລາຍຮັບຈາກກອງທຶນຂອງລັດ ຈຳນວນ 12,15 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 4,94 ຕື້ກີບ, ຍັງຄ້າງ ຈຳນວນ 7,21 ຕື້ກີບ.

1.2 ດ້ານລາຍຈ່າຍ: ກວດສອບເຫັນເພີ່ມ ຈຳນວນ 113,63 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 26,11 ຕື້ກີບ, ຍັງບໍ່ທັນແກ້ໄຂ ຈຳນວນ 87,52 ຕື້ກີບ, ໃນນັ້ນ:

- ຈ່າຍນອກແຜນ ຈຳນວນ 88,04 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 5,82 ຕື້ກີບ, ຍັງຄ້າງຈຳນວນ 82,22 ຕື້ກີບ;
- ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ຈຳນວນ 25,59 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 20,29 ຕື້ກີບ, ຍັງຄ້າງ ຈຳນວນ 5,30 ຕື້ກີບ.

2. ຜົນການກວດສອບປິດສະຫຼຸບຂາດຕົວງົບປະມານແຫ່ງລັດ ປະຈຳປີ 2020

2.1 ກວດສອບເຫັນລາຍຮັບ-ລາຍຈ່າຍ ເພີ່ມ ມີດັ່ງນີ້:

- ກວດເຫັນລາຍຮັບເພີ່ມ ຈຳນວນ 170,11 ຕື້ກີບ;
- ກວດເຫັນລາຍຈ່າຍເພີ່ມ ຈຳນວນ 96,39 ຕື້ກີບ ໃນນີ້: ຈ່າຍນອກແຜນ ຈຳນວນ 63,94 ຕື້ກີບ ແລະ ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ຈຳນວນ 32,45 ຕື້ກີບ.

ສຳລັບ ລາຍຮັບ-ລາຍຈ່າຍ ທີ່ກວດເຫັນເພີ່ມດັ່ງກ່າວ ໃຫ້ຈັດສັນເຂົ້າແຜນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ປະຈຳປີ 2022.

2.2 ຜົນການກວດສອບການຄຸ້ມຄອງລາຍຮັບ ມີດັ່ງນີ້:

- ໜີ້ຕ້ອງຮັບສະສົມຂອງສ່ວຍສາອາກອນ ຈຳນວນ 1.202,36 ຕື້ກີບ, ໃນນັ້ນ ເກີດຂຶ້ນໃນປີ 2020 ຈຳນວນ 290,55 ຕື້ກີບ;
- ໜີ້ຕ້ອງຮັບສະສົມຂອງຊັບສິນຂອງລັດ ຈຳນວນ 1.397,97 ຕື້ກີບ, ໃນນັ້ນ ເກີດຂຶ້ນໃນປີ 2020 ຈຳນວນ 527,50 ຕື້ກີບ;
- ໜີ້ຕ້ອງຮັບສະສົມຂອງວິສາຫະກິດລັດລົງທຶນ ຈຳນວນ 2.424,05 ຕື້ກີບ, ໃນນັ້ນ ເກີດຂຶ້ນໃນປີ 2020 ຈຳນວນ 10,38 ຕື້ກີບ;
- ໜີ້ຕ້ອງຮັບອື່ນໆ ຈຳນວນ 195,57 ຕື້ກີບ, ໃນນັ້ນ ເກີດຂຶ້ນໃນປີ 2020 ຈຳນວນ 14,59 ຕື້ກີບ;
- ເງິນຄ້າງສະສາງໃນບັນຊີເງິນຝາກອົງການບໍລິຫານວິຊາການ ຈຳນວນ 25,84 ຕື້ກີບ;

- ບັນຊີເງິນຝາກທະນາຄານທຸລະກິດລັດ 13 ບັນຊີ ທີ່ບໍ່ນອນໃນລະບົບຄັງເງິນແຫ່ງຊາດ ມີຍອດເຫຼືອບັນຊີ ຈຳນວນ 0,26 ຕື້ກີບ, ຈຳນວນ 2.846.611 ໂດລາສະຫະລັດ ແລະ ຈຳນວນ 150.935 ບາດ;
- ກວດເຫັນ 3 ແຂວງ ທີ່ໄດ້ອະນຸຍາດໃຫ້ບໍລິສັດ ສຳປະທານດິນລັດໂດຍບໍ່ໄດ້ສ້າງສັນຍາເຊົ່າ-ສຳປະທານ ຈຳນວນ 10 ໂຄງການ, ມີເນື້ອທີ່ 78,75 ເຮັກຕາ.

2.3 ຜົນການກວດສອບການຄຸ້ມຄອງລາຍຈ່າຍ ມີດັ່ງນີ້:

- ລາຍຈ່າຍເງິນລ່ວງໜ້າໃນລະບົບຄັງເງິນແຫ່ງຊາດ ຄ້າງສະສາງ ຈຳນວນ 1.331,66 ຕື້ກີບ, ໃນນັ້ນ ຄ້າງສະສາງທີ່ເກີດຂຶ້ນໃນປີ 2020 ຈຳນວນ 32,45 ຕື້ກີບ;
- ການນຳໃຊ້ເງິນແຮຂອງທ້ອງຖິ່ນບໍ່ຖືກຕ້ອງຕາມເປົ້າໝາຍລາຍຈ່າຍ ແລະ ບໍ່ໄດ້ຜ່ານການຮັບຮອງຈາກ ສະພາປະຊາຊົນຂັ້ນແຂວງ ຈຳນວນ 5,35 ຕື້ກີບ;
- ໂຄງການບໍ່ໄດ້ດຳເນີນຂັ້ນຕອນນຳສະເໜີສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຮັບຮອງ ຈຳນວນ 8 ໂຄງການ, ມູນຄ່າສັນຍາ ຈຳນວນ 37,07 ຕື້ກີບ.

3. ຜົນການກວດສອບເອກະສານລາຍງານການເງິນ ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ

ໄດ້ກວດສອບ 21 ໂຄງການ ພົບເຫັນການລະເມີດໃນແຜນການ-ການເງິນ ເປັນຕົ້ນ: ການນຳໃຊ້ເງິນບໍ່ຖືກກັບແຜນລາຍຈ່າຍປະຈຳປີ ຈຳນວນ 1,05 ຕື້ກີບ, ບໍ່ປະຕິບັດຕາມກິດຈະກຳຕາມແຜນການທີ່ກຳນົດໄວ້ ຈຳນວນ 443,08 ຕື້ກີບ ແລະ ການຈັດຊື້-ຈັດຈ້າງ ບາງບໍລິສັດທີ່ມີມູນຄ່າບໍ່ສູງ, ຊຶ່ງບໍ່ສອດຄ່ອງຕາມຂັ້ນຕອນຂອງກົດໝາຍ ຈຳນວນ 14,44 ຕື້ກີບ.

4. ຜົນການກວດສອບເອກະສານລາຍງານການເງິນ ຂອງ ທະນາຄານທຸລະກິດລັດ

ໄດ້ກວດສອບທັງໝົດ 6 ເປົ້າໝາຍ ໃນນັ້ນ, ມີ 3 ທະນາຄານ ດຳເນີນທຸລະກິດຂາດທຶນຫຼາຍປີຕໍ່ເນື່ອງສະສົມ ຈຳນວນ 8.417,54 ຕື້ກີບ; ມີ 2 ທະນາຄານມີໜີ້ບໍ່ເກີດດອກອອກຜົນ (NPL) ເກີນອັດຕາ 3% ຂອງໜີ້ສິນທັງໝົດ ຈຳນວນ 1.413,72 ຕື້ກີບ; ມີ 4 ທະນາຄານ ມີໜີ້ຕ້ອງຮັບຈາກການລັກໄລເງິນຂອງພະນັກງານພາຍໃນ ແລະ ພາກສ່ວນພາຍນອກ ສະສົມ ຈຳນວນ 290,46 ຕື້ກີບ; ມີ 1 ທະນາຄານປ່ອຍສິນເຊື່ອບໍ່ຖືກຕາມເປົ້າໝາຍ ຈຳນວນ 297,95 ຕື້ກີບ.

5. ຜົນການກວດສອບເອກະສານລາຍງານການເງິນ ວິສາຫະກິດລັດລົງທຶນ

ໄດ້ກວດສອບທັງໝົດ 9 ເປົ້າໝາຍ ເຫັນວ່າ 2 ເປົ້າໝາຍ ເບີກຈ່າຍເງິນນະໂຍບາຍດ້ານວັດຖຸ ແຕ່ບໍ່ໄດ້ເອົາລວມເຂົ້າກັບເງິນເດືອນພື້ນຖານ ເພື່ອຄິດໄລ່ອາກອນລາຍໄດ້ ຈຳນວນ 1,49 ຕື້ກີບ; 8 ເປົ້າໝາຍ ໄດ້ນຳໃຊ້ໃບເກັບເງິນທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງສ່ວຍສາອາກອນ ຈຳນວນ 36,97 ຕື້ກີບ; 6 ເປົ້າໝາຍ ມີການຈັດຊື້-ຈັດຈ້າງ ບໍ່ໄດ້ປະຕິບັດຕາມຂັ້ນຕອນຂອງກົດໝາຍ ຈຳນວນ 28,15 ຕື້ກີບ; 3 ເປົ້າໝາຍ ບໍ່ໄດ້ບັນທຶກລາຍຮັບ ແລະ ໜີ້ຕ້ອງຮັບຄ່າບໍລິການ, ເງິນປັນຜົນ, ຄ່າໝໍ້ນັບໄຟກະແສໄຟຟ້າ ແລະ ຄ່າກະແສໄຟຟ້າ ເຂົ້າໃນບັນຊີລວມ ຈຳນວນ 1.027,46 ຕື້ກີບ; 1 ເປົ້າໝາຍ ບັນທຶກລາຍຈ່າຍເງິນຄ່າກະແສໄຟຟ້າ ເກີນມູນຄ່າຜະລິດກະແສໄຟຟ້າສົ່ງຕົວຈິງ ຈຳນວນ 1.462,52 ຕື້ກີບ; ລັດວິສາຫະກິດນ້ຳປະປາ ຄ້າງມອບພັນທະອາກອນໃຫ້ລັດ ຈຳນວນ 8,35 ຕື້ກີບ, ມີຍອດເຫຼືອໜີ້ຕ້ອງຮັບ ທີ່ຍັງບໍ່ສາມາດເກັບຄືນໄດ້ ຈຳນວນ 42,86 ຕື້ກີບ ແລະ ມີໜີ້ຕ້ອງສົ່ງ ຈຳນວນ 87,92 ຕື້ກີບ.

## ມາດຕາ 2 ຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2021

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດສອບແຫ່ງລັດ ທີ່ໄດ້ເອົາໃຈໃສ່ສູ້ຊົນ ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ໃນເງື່ອນໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແຜ່ລະບາດຂອງພະຍາດ ໂຄວິດ-19, ແຕ່ອົງການກວດສອບແຫ່ງລັດ ໄດ້ພະຍາຍາມ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ, ຊຶ່ງສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ຄື: ໄດ້

ຈັດຕັ້ງປະຕິບັດແຜນການກວດສອບ, ປັບປຸງນິຕິກຳ ແລະ ກົນໄກປະສານງານກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ: ສຳເລັດບົດບັນທຶກການປະສານງານ ກັບ ສະພາປະຊາຊົນຂັ້ນແຂວງ ໄດ້ 2 ແຂວງ, ອົງການໄອຍະການປະຊາຊົນສູງສຸດ ແລະ ຍົກລະດັບຂີດຄວາມສາມາດໃຫ້ແກ່ພະນັກງານກວດສອບ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານກວດສອບ ໃຫ້ມີຄຸນນະພາບສູງຂຶ້ນ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ, ອົງການກວດສອບແຫ່ງລັດ ຍັງມີຂໍ້ຄົງຄ້າງ ທີ່ຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ເປັນຕົ້ນ: ການຈັດຕັ້ງປະຕິບັດບາງມາດຕາຂອງ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ; ບາງມາດຕາ ຍັງບໍ່ທັນໄດ້ຮັບການຜັນຂະຫຍາຍ ໃຫ້ເປັນນິຕິກຳໃຕ້ກົດໝາຍສຳເລັດຕາມແຜນການ; ການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານກວດສອບ ໃຫ້ແກ່ເປົ້າໝາຍທີ່ຖືກກວດສອບ, ອົງການຄຸ້ມຄອງເປົ້າໝາຍທີ່ຖືກກວດສອບຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນກວ້າງຂວາງ ແລະ ທົ່ວເຖິງ; ການຍົກລະດັບ ຄວາມຮູ້ຄວາມສາມາດ ແລະ ປະສົບການທາງດ້ານວິຊາສະເພາະ ຂອງພະນັກງານ-ນັກກວດສອບ ບໍ່ທັນໄດ້ຕາມແຜນການ.

## ມາດຕາ 3 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022

ກອງປະຊຸມ ເຫັນດີເປັນເອກະພາບຕໍ່ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການກວດສອບແຫ່ງລັດ ເປັນຕົ້ນ: 6 ຄາດໝາຍສູ້ຊົນ, 7 ວຽກຈຸດສຸມ ແລະ 104 ເປົ້າໝາຍກວດສອບ ຊຶ່ງປະກອບດ້ວຍ: ອົງການຈັດຕັ້ງລັດຂັ້ນສູນກາງ 25 ເປົ້າໝາຍ, ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ 19 ເປົ້າໝາຍ; ວິສາຫະກິດລັດລົງທຶນ 10 ເປົ້າໝາຍ; ທະນາຄານ 6 ເປົ້າໝາຍ; ອົງການກວດສອບປະຈຳພາກເໜືອ 19 ເປົ້າໝາຍ; ອົງການກວດສອບປະຈຳພາກກາງ 14 ເປົ້າໝາຍ; ອົງການກວດສອບປະຈຳພາກໃຕ້ 11 ເປົ້າໝາຍ (ລາຍລະອຽດ ຕາມເອກະສານຊ້ອນທ້າຍ).

ກອງປະຊຸມ ມອບໃຫ້ ອົງການກວດສອບແຫ່ງລັດ ດຳເນີນການກວດສອບເປົ້າໝາຍ ດັ່ງຕໍ່ໄປນີ້:

1. ກວດສອບການຄຸ້ມຄອງບໍລິຫານ ກອງທຶນລຶບລ້າງຄວາມທຸກຍາກ;
2. ກວດສອບການຄຸ້ມຄອງບໍລິຫານ ງົບປະມານຮັບໃຊ້ການຕ້ານ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດໂຄວິດ-19;
3. ກວດສອບການຄຸ້ມຄອງບໍລິຫານ ກອງທຶນປະກັນສັງຄົມ;
4. ກວດສອບການຄຸ້ມຄອງບໍລິຫານ ກອງທຶນຄົ້ນຄວ້າວິທະຍາສາດ.

## ມາດຕາ 4 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ

4.1 ມາດຕະການແນະນຳປັບປຸງແກ້ໄຂຜົນການກວດສອບ ບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ແລະ ຜົນການກວດສອບ ປີ 2020

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາບັນດາມາດຕະການແນະນຳ ປັບປຸງແກ້ໄຂຜົນການກວດສອບຂອງອົງການກວດສອບແຫ່ງລັດ ດັ່ງນີ້:

1. ກະຊວງການເງິນ

- ເລັ່ງທວງເກັບລາຍຮັບທີ່ກວດສອບເຫັນເພີ່ມ ຕາມຜົນການກວດສອບ ປະຈຳປີ 2020 ຈຳນວນ 106,17 ຕື້ກີບ ເຂົ້າແຜນງົບປະມານແຫ່ງລັດ ປະຈຳປີ 2022;
- ເລັ່ງທວງເກັບໜີ້ຕ້ອງຮັບຂອງສ່ວນລາຍຮັບ, ຊັບສິນຂອງລັດ, ບັນດາຫົວໜ່ວຍງົບປະມານ ແລະ ວິສາຫະກິດລັດລົງທຶນ ຈຳນວນ 5.219,95 ຕື້ກີບ;
- ສືບຕໍ່ແກ້ໄຂ ເງິນຈ່າຍລ່ວງໜ້າ ທີ່ຄ້າງຊຳລະໃນບັນຊີຄັງເງິນແຫ່ງຊາດປະຈຳແຂວງ ຮອດທ້າຍປີ 2020 ຈຳນວນ 1.331,66 ຕື້ກີບ;

- ຊີ້ນຳຫົວໜ່ວຍງົບປະມານ ປິດບັນຊີເງິນຝາກສ່ວນບໍລິຫານວິຊາການ ຢູ່ທະນາຄານທຸລະກິດ ທີ່ບໍ່ໄດ້ຮັບອະນຸຍາດຈາກຜູ້ສັ່ງການເອກ ຈຳນວນ 0,26 ຕື້ກີບ, ຈຳນວນ 2.846.611 ໂດລາສະຫະລັດ ແລະ ຈຳນວນ 150.935 ບາດ;
- ກວດກາ ແລະ ໄລ່ລຽງເອົາເງິນທີ່ເຫຼືອຈາກການຈັດຕັ້ງປະຕິບັດກິດຈະກຳທີ່ບໍ່ໄດ້ຈ່າຍ ຫຼື ຈ່າຍບໍ່ໝົດ ຈຳນວນ 17,82 ຕື້ກີບ ມອບຄືນເຂົ້າງົບປະມານແຫ່ງລັດ.

2. ກະຊວງແຜນການ ແລະ ການລົງທຶນ

- ກວດກາຄືນ ບັນດາໂຄງການທີ່ໄດ້ອະນຸຍາດໃຫ້ສຳປະທານດິນລັດ ຈຳນວນ 10 ໂຄງການ, ເນື້ອທີ່ 78,75 ເຮັກຕາ ເພື່ອສ້າງສັນຍາໃຫ້ຄົບຖ້ວນ ແລະ ນຳໄປຍື່ນຢູ່ສຳນັກງານທະບຽນສານ;
- ກວດຄືນ 8 ໂຄງການ ທີ່ມີມູນຄ່າສັນຍາ ຈຳນວນ 37,07 ຕື້ກີບ ທີ່ສະພາແຫ່ງຊາດ ຍັງບໍ່ທັນໄດ້ຮັບຮອງ;
- ກວດຄືນການຈັດສັນແຜນງົບປະມານລົງທຶນຂອງລັດ ບ້ວງປົກກະຕິ ຈຳນວນ 2.600 ຕື້ກີບ ໃຫ້ 9 ເປົ້າໝາຍ ລົບເລີກບໍ່ມີໃນມະຕິສະພາແຫ່ງຊາດ ສະບັບເລກທີ 20/ສພຊ, ລົງວັນທີ 18 ພະຈິກ 2019 ຈຳນວນ 65,22 ຕື້ກີບ;
- ກວດຄືນການຈັດສັນແຜນລາຍຈ່າຍງົບປະມານລົງທຶນບ້ວງປົກກະຕິໃຫ້ ກະຊວງ, ອົງການລັດທຽບເທົ່າ ທີ່ເກີນອັດຕາສ່ວນຕາມກົດໝາຍ ຈຳນວນ 289,23 ຕື້ກີບ;
- ກວດຄືນການເອົາໂຄງການລົງທຶນປົກກະຕິຂອງລັດ ທີ່ຢູ່ໃນໄລຍະການຊຳລະໂຄງການຂັ້ນສຸດທ້າຍ ແລະ ທ້ອງຖິ່ນບັນຈຸເຂົ້າຢູ່ໃນແຜນຊຳລະໂຄງການຊຳລະໜີ້ສິນ ຈຳນວນ 114 ໂຄງການ ມູນຄ່າ 4.233,38 ຕື້ກີບ;
- ກວດຄືນການຈັດຕັ້ງປະຕິບັດໂຄງການທີ່ ສະພາແຫ່ງຊາດຮັບຮອງ ຈຳນວນ 13 ໂຄງການ ທີ່ບໍ່ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ;
- ກວດຄືນໂຄງການລົງທຶນຂອງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງ ແຕ່ບໍ່ໄດ້ດຳເນີນຕາມຂັ້ນຕອນກົດໝາຍ ຈຳນວນ 8 ເປົ້າໝາຍ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ແຂວງ ຊຽງຂວາງ, ໄຊສົມບູນ, ຈຳປາສັກ, ເຊກອງ, ສາລະວັນ, ນະຄອນຫຼວງວຽງຈັນ).

3. ທະນາຄານແຫ່ງ ສປປ ລາວ

- ຊີ້ນຳທະນາຄານສົ່ງເສີມກະສິກຳ, ທະນາຄານພັດທະນາລາວ, ທະນາຄານນະໂຍບາຍ ທົບທວນແຜນການຟື້ນຟູ ເພື່ອແກ້ໄຂບັນຫາການຂາດທຶນ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ມາດຕາ 79 ແລະ ມະຕິຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 141/ຄປຈ, ລົງວັນທີ 4 ກັນຍາ 2019 ມາດຕາ 2 ຂໍ້ 2 ແລະ ໃຫ້ສຳເລັດຕາມກຳນົດເວລາ;
- ກວດຄືນ ການດຳເນີນທຸລະກິດຂາດທຶນຕໍ່ເນື່ອງຂອງ ທະນາຄານທຸລະກິດ 3 ແຫ່ງ (ທະນາຄານພັດທະນາລາວ, ສົ່ງເສີມກະສິກຳ, ນະໂຍບາຍ) ຈຳນວນ 8.417,54 ຕື້ກີບ;
- ກວດຄືນ ທະນາຄານທຸລະກິດ 2 ແຫ່ງ (ທະນາຄານ ພັດທະນາລາວ, ນະໂຍບາຍ) ທີ່ມີໜີ້ບໍ່ເກີດດອກອອກຜົນ (NPL) ເກີນອັດຕາ 3% ຂອງໜີ້ສິນທັງໝົດ ຈຳນວນ 1.413,72 ຕື້ກີບ;
- ຮີບຮ້ອນເກັບກູ້ຄືນ ໜີ້ຕ້ອງຮັບຈາກການລັກໂລບເງິນຂອງພະນັກງານພາຍໃນ ແລະ ພາກສ່ວນພາຍນອກ ຈຳນວນ 290,46 ຕື້ກີບ;
- ຕິດຕາມ, ກວດກາ ການປ່ອຍສິນເຊື່ອຂອງ ທະນາຄານພັດທະນາລາວ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ແກ້ໄຂຄວາມຫຍຸ້ງຍາກຂອງຄົນ ໃນການປ່ອຍສິນເຊື່ອໃຫ້ແກ່ວິສາຫະກິດ ຂະໜາດນ້ອຍ ແລະ ກາງ.

4. ບັນດາແຂວງ ແລະ ນະຄອນຫລວງ

- ຊີ້ນຳພະແນກກ່ຽວຂ້ອງຂອງຕົນ ເພີ່ມຄວາມເປັນເຈົ້າການ ແລະ ຍົກສູງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດບັນດາໂຄງການ ຕິດພັນກັບເປົ້າໝາຍການພັດທະນາແບບຍືນຍົງ, ການກຳນົດໂຄງການ ທີ່ຈະສະເໜີເຂົ້າແຜນໃຫ້ມີຄວາມຊັດເຈນ, ປະຕິບັດຕາມລະບຽບການລົງທຶນຂອງລັດ ໃຫ້ຖືກຕ້ອງຕາມຂັ້ນຕອນຢ່າງເຂັ້ມງວດ;
- ມອບໃຫ້ຫົວໜ່ວຍງົບປະມານທີ່ລະເມີດວິໄນແຜນການ-ການເງິນ ປະສານສົມທົບກັບຂະແໜງການເງິນ ເພື່ອແກ້ໄຂຜົນການກວດສອບລາຍຮັບ ແລະ ລາຍຈ່າຍ ທີ່ກວດເຫັນເພີ່ມໃຫ້ຂາດຕົວ;
- ໃຫ້ອົງການປົກຄອງ ແຂວງ ຄຳມ່ວນ ແລະ ແຂວງສາລະວັນ ນຳໃຊ້ຊ່ອງເງິນບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ໃຫ້ສອດຄ່ອງ ຕາມດຳລັດວ່າດ້ວຍກອງທຶນທາງ;
- ໃຫ້ອົງການປົກຄອງແຂວງ ສາລະວັນ, ແຂວງ ເຊກອງ ແລະ ແຂວງ ອັດຕະປື ຮີບຮ້ອນແກ້ໄຂ ການກຳນົດລາຄາຂາຍໄມ້ ທີ່ຕ່ຳກວ່າລາຄາທາງ ຈຳນວນ 8 ສັນຍາ ບໍລິມາດ 2.252,87 ແມັດກ້ອນ, ມູນຄ່າ 3,19 ຕື້ກີບ, ແຂວງ ອັດຕະປື ຈຳນວນ 2 ສັນຍາ ບໍລິມາດ 575,91 ແມັດກ້ອນ ຈຳນວນ 0,37 ຕື້ກີບ.

4.2 ມາດຕະການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ 6 ມາດຕະການຈັດຕັ້ງປະຕິບັດວຽກງານການກວດສອບ ປະຈຳປີ 2022 ຕາມການສະເໜີຂອງອົງການກວດສອບແຫ່ງລັດ. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານດັ່ງກ່າວ ບັນລຸຕາມຄາດໝາຍທີ່ວາງໄວ້, ກອງປະຊຸມສະເໜີມາດຕະການເພີ່ມເຕີມ ດັ່ງນີ້:

1. ມອບໃຫ້ ລັດຖະບານ:
   - ເອົາໃຈໃສ່ຊີ້ນຳ ອົງການຄຸ້ມຄອງເປົ້າໝາຍທີ່ຖືກກວດສອບແກ້ໄຂຜົນການກວດສອບຕາມຂໍ້ແນະນຳ ໃຫ້ເຂັ້ມງວດ ແລະ ຂາດຕົວ;
   - ຄົ້ນຄວ້າຈັດສັນງົບປະມານ ແລະ ເຄື່ອງມືອຸປະກອນ ຢ່າງເໝາະສົມ ແລະ ທັນເວລາ ເພື່ອໃຫ້ອົງການກວດສອບແຫ່ງລັດ ສາມາດເຄື່ອນໄຫວປະຕິບັດວຽກງານຈຸດສຸມປະຈຳປີ 2022 ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ບັນລຸຕາມແຜນການ;
   - ຊີ້ນຳບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ເພີ່ມຄວາມເອົາໃຈໃສ່ໃນການຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນ ແລະ ໃຫ້ຄວາມກະຈ່າງແຈ້ງກ່ຽວກັບວຽກງານກວດສອບ ພ້ອມທັງຍົກສູງຄວາມຮັບຜິດຊອບໃນການແກ້ໄຂຜົນການກວດສອບ.
2. ມອບໃຫ້ ອົງການກວດສອບແຫ່ງລັດ:
   - ເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳລະອຽດ ຊີ້ນຳຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ມີປະສິດທິຜົນ;
   - ເອົາໃຈໃສ່ ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ເພື່ອຮັບປະກັນການກວດສອບບັນດາເປົ້າໝາຍທີ່ໄດ້ກຳນົດໄວ້ ເປັນຕົ້ນ: ການນຳໃຊ້ງົບປະມານແຫ່ງລັດ, ເງິນກອງທຶນຂອງລັດ, ໂຄງການລົງທຶນຂະໜາດໃຫຍ່, ການໄລ່ລຽງ ແລະ ເກັບທວງພາສີ-ອາກອນ ເຂົ້າງົບປະມານແຫ່ງລັດ, ການແກ້ໄຂໜີ້ສິນ, ການເຊົ່າສຳປະທານດິນລັດ, ການຫັນຊັບສິນເປັນທຶນ, ການຈັດຊື້-ຈັດຈ້າງ, ການລະບາຍເງິນຈ່າຍລ່ວງໜ້າໃນລະບົບຄັງເງິນ, ການຄຸ້ມຄອງເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ;

- ເອົາໃຈໃສ່ ປັບປຸງກົນໄກການປະສານງານ ແລະ ການປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມວຽກງານກວດສອບ ແລະ ແກ້ໄຂຜົນການກວດສອບ ຢ່າງເຂັ້ມງວດ ແລະ ທັນການ;
- ເອົາໃຈໃສ່ປະຕິບັດ ແລະ ປັບປຸງ ກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ ພ້ອມທັງຜັນຂະຫຍາຍບາງມາດຕາຂອງກົດໝາຍ ອອກເປັນນິຕິກຳໃຕ້ກົດໝາຍໃຫ້ ລະອຽດ, ຈະແຈ້ງ ແລະ ສຳເລັດໂດຍໄວ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານກວດສອບມີປະສິດທິພາບ ແລະ ປະສິດທິຜົນ ສູງຂຶ້ນ;
- ເອົາໃຈໃສ່ ວຽກງານສ້າງຄວາມເຂັ້ມແຂງ, ຍົກລະດັບຄວາມຮູ້-ຄວາມສາມາດ ທາງດ້ານວິຊາສະເພາະ ຕາມທິດຫັນເປັນມືອາຊີບ ຂອງພະນັກງານ ແລະ ນັກກວດສອບ ເພື່ອປະຕິບັດໜ້າທີ່ຂອງຕົນໃຫ້ມີຜົນສຳເລັດ ແລະ ມີຄຸນນະພາບສູງກວ່າເກົ່າ;
- ສືບຕໍ່ຫັນເປັນທັນສະໄໝ, ຮັບປະກັນໃຫ້ມີຖານຂໍ້ມູນທີ່ເປັນລະບົບຄົບຊຸດ ແລະ ສາມາດເຊື່ອມໂຍງກັບ ຄັງເງິນແຫ່ງຊາດ ໃຫ້ອົງການກວດສອບແຫ່ງລັດ ສາມາດກວດສອບໄດ້ແຕ່ຫົວທີ ຕໍ່ການເບີກຈ່າຍແຕ່ລະຄັ້ງ ເພື່ອແກ້ໄຂບັນຫາການລະເມີດການຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ແລະ ຮັບປະກັນ ການສະໜອງຂໍ້ມູນໃຫ້ຄົບຖ້ວນ ແລະ ການລາຍງານຕໍ່ ກອງປະຊຸມສະພາແຫ່ງຊາດ;
- ເອົາໃຈໃສ່ຄົ້ນຄວ້າວິເຄາະ, ວິໄຈບັນຫາການກວດສອບໃຫ້ລະອຽດ ແລະ ເລິກເຊິ່ງ ໃຫ້ເຫັນໄດ້ສາເຫດຂອງການລະເມີດ, ວິທີການ ແລະ ມາດຕະການແກ້ໄຂຜົນການກວດສອບທີ່ມີຄຸນນະພາບ, ເດັດຂາດ ແລະ ທັນການ.

3. ມອບໃຫ້ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ:
- ເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດວຽກງານຈຸດສຸມຂອງອົງການກວດສອບແຫ່ງລັດ ເປັນຕົ້ນ: ການກຳນົດເປົ້າໝາຍການກວດສອບ, ການດຳເນີນການກວດສອບ, ການແກ້ໄຂຜົນການກວດສອບ, ການກວດຄືນການແກ້ໄຂຜົນການກວດສອບ ແລະ ວຽກງານອື່ນໆ ຕາມມະຕິຂອງສະພາແຫ່ງຊາດໃຫ້ເປັນຮູບປະທຳ;
- ຕິດຕາມກວດກາຄວາມສອດຄ່ອງ ແລະ ຄວາມສັກສິດໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບວຽກງານກວດສອບ ພ້ອມທັງຊຸກຍູ້ລັດຖະບານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ອຳນວຍຄວາມສະດວກ ໃຫ້ແກ່ວຽກງານກວດສອບ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການກວດສອບແຫ່ງລັດ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ລັດຖະບານຊີ້ນຳບັນດາ ກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ມະຕິ ສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ